PetroTrade

ບົດລາຍງານ

ການດຳເນີນທຸລະກິດ 6 ເດືອນຕົ້ນປີ 2017

ສິ້ນສຸດວັນທີ 30 ມິຖຸນາ 2017

ວິໄສທັດ/ Vision

ເປັນບໍລິສັດຊັ້ນນຳ ທາງດ້ານພະລັງງານເຊື້ອໄຟ ທີ່ຄົບວົງຈອນດ້ານຜະລິດຕະພັນປິໂຕຣລ້ຽມ ໃນສປປ ລາວ ແລະ ເຊື່ອມໂຍງການຄ້າໃນລະດັບອາຊຽນ ພາຍໃນ 5 ປີ.

Be a leader of Petroleum business in Lao PDR andlink the commcercial with ASEAN within 5 years.

ພາລະກິດ / Mission

ສ້າງທຸລະກິດພະລັງງານເຊື້ອໄຟຂອງເອກະຊົນລາວທີ່ຄົບວົງຈອນເປັນທີ່ຍອມຮັບແລະເຊື່ອໝັ້ນຂອງສັງຄົມ ສາມາດເຊື່ອມໂຍງການຄ້າໃນລະດັບພູມມິພາກ, ສ້າງ ແລະ ແບ່ງປັນຜົນປະໂຫຍດຕໍ່ຜູ້ທີ່ມີສ່ວນກ່ຽວພັນ ແລະ ສັງຄົມ.

Create Lao private sector's petroleum business fully integration with accpepted and confidence for the end users, linked commercial in the region, create and sharing profitibilities of those involved and to the societies.





ປະຫວັດຄວາມເປັນມາຂອງ ປິໂຕຣເທຣດ

ບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ(Petroleum Trading Lao PublicCompany)ຫຼື ທີ່ຮູ້ຈັກກັນໃນນາມ ປິໂຕຣເທຣດ ສ້າງຕັ້ງຂຶ້ນໂດຍ ທ່ານ ຈັນທອນ ສິດທິໄຊ ແລະ ພັນລະຍາຄື ທ່ານ ນາງ ສະຫວັນທອງ ພົງສະຫວັນ ເຊິ່ງທັງສອງທ່ານລ້ວນແຕ່ເປັນນັກທຸລະກິດທີ່ມີຊື່ສຽງໃນ ສປປ ລາວ ແລະ ມີປະສົບການໃນການປະກອບທຸລະກິດທີ່ຫຼາກຫຼາຍເປັນຕົ້ນແມ່ນທຸລະກິດນຳເຂົ້າ ແລະ ສົ່ງອອກສິນຄ້າຫຼາຍປະເພດໃນ ສປປ ລາວ.

ທີ່ຜ່ານມາ ທັງສອງທ່ານໄດ້ມີໂອກາດເດີນທາງເພື່ອສຳຫຼວດພື້ນທີ່ໃນຕົວເມືອງຕ່າງໆທັງໃນເຂດຊຸມຊົນ ແລະ ເຂດຊົນນະບົດຫ່າງໄກສອກຫຼີກເກືອບທຸກພື້ນທີ່ໃນ ສປປ ລາວ ເຊິ່ງທ່ານໄດ້ເບິ່ງເຫັນຄວາມຫຍຸ້ງຍາກໃນການເຂົ້າເຖິງແຫຼ່ງພະລັງງານ ຫຼື ນ້ຳມັນໂດຍສະເພາະໃນເຂດພື້ນທີ່ຫ່າງໄກສອກຫຼີກ ແລະ ເຫັນວ່ານ້ຳມັນທີ່ຂາຍໃນເຂດດັ່ງກ່າວແມ່ນມີລາຄາແພງເກີນກວ່າລາຄາປົກກະຕິທີ່ລັດຖະບານກຳນົດ. ດ້ວຍເຫັນໄດ້ເຖິງຄວາມຕ້ອງການໃນການຊົມໃຊ້ນ້ຳມັນປະກອບກັບແນວໂນ້ມການພັດທະນາເສດຖະກິດຈາກພາກລັດຖະບານ ໂດຍຖືເອົານ້ຳມັນເຊື້ອເພີງເປັນຊັບພະຍາກອນພື້ນຖານທີ່ສຳຄັນໃນການປະກອບສ່ວນໃນການພັດທະນາເສດຖະກິດຂອງປະເທດ. ສະນັ້ນ, ທ່ານ ຈັນທອນ ຈຶ່ງມີແນວຄວາມຄິດໃນການທີ່ຈະສ້າງສະຖານີບໍລິການນ້ຳມັນທີ່ມີຄຸນນະພາບ ແລະ ລາຄາຍຸຕິທຳໃຫ້ແກ່ປະຊາຊົນໃນຂົງເຂດຫ່າງໄກ ແລະ ກະຈາຍທົ່ວ ສປປ ລາວ, ດ້ວຍເຫດຜົນທີ່ກ່າວມາຂ້າງເທິງນັ້ນ ຈຶ່ງເປັນຈຸດເລີ່ມຕົ້ນຂອງການສ້າງຕັ້ງບໍລິສັດຂຶ້ນໃນວັນທີ 6 ກຸມພາ 2008 ດ້ວຍທຶນຈົດທະບຽນເບື້ອງຕົ້ນ 28.80 ຕື້ກີບ ເພື່ອໃຫ້ບໍລິການນຳເຂົ້າ ແລະ ຈັດຈຳໜ່າຍນ້ຳມັນຜ່ານທາງສະຖານີບໍລິການນ້ຳມັນ, ໂຄງການກໍ່ສ້າງຕ່າງໆລວມໄປເຖິງໂຄງການກໍ່ສ້າງພື້ນຖານໂຄງລ່າງ ໂດຍມີສຳນັກງານໃຫຍ່ຕັ້ງຢູ່ບ້ານ ສຸນັນທາ, ເມືອງ ໄກສອນພົມວິຫານ, ແຂວງ ສະຫວັນນະເຂດ.


ບໍລິສັດໄດ້ນຳເຂົ້ານ້ຳມັນເຊື້ອໄຟຈາກໂຮງກັ່ນນ້ຳມັນທີ່ມີຊື່ສຽງ ແລະ ເປັນທີ່ຍອມຮັບໃນດ້ານຄຸນນະພາບໃນລະດັບສາກົນ ໂດຍນຳເຂົ້ານ້ຳມັນຈາກຜູ້ຜະລິດໃນປະເທດໄທ ເຊິ່ງປະກອບດ້ວຍ Chevron (Thailand) Limited (Chevron), ESSO (Thailand) Public Company Limited (ESSO), IRPC Public Company Limited(IRPC) ແລະ The Shell Company of Thailand Limited (Shell).

ປີ		ສະຫຼຸບຫຍໍ້ເຫດການທີ່ພົ້ນເດັ່ນ
ປີ 2008	:	➢ ບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ຈຳກັດ ສ້າງຕັ້ງຂຶ້ນດ້ວຍທຶນຈົດທະບຽນ 28.80 ຕື້ກີບ ໂດຍທ່ານ ຈັນທອນ ສິດທິໄຊ ແລະ ທ່ານ ນາງ ສະຫວັນທອງ ພົງສະຫວັນ ຖືຮຸ້ນໃນສັດສ່ວນ 75 ສ່ວນຮ້ອຍ ແລະ 25 ສ່ວນຮ້ອຍຕາມລຳດັບ ໂດຍມີວັດຖຸປະສົງຫຼັກຄືການນຳເຂົ້າ ແລະ ຈັດຈຳໜ່າຍນ້ຳມັນເຊື້ອໄຟຜ່ານສະຖານີບໍລິການນ້ຳມັນໃນ ສປປ ລາວ.
ປີ 2009	:	➢ ສ້າງສະຖານີບໍລິການນ້ຳມັນທີ່ໄດ້ມາດຕະຖານແຫ່ງທຳອິດຂຶ້ນທີ່ ໂພນທັນຊື່ວ່າ ປ້ຳນ້ຳມັນ ພລັສ 1 (Plus 1). ➢ ເປີດນຳໃຊ້ສາງນ້ຳມັນແຫ່ງທຳອິດ ທີ່ແຂວງສະຫວັນນະເຂດ ບໍລິມາດບັນຈຸ700,000 ລິດ.
ປີ 2010	:	➢ ໄດ້ຮັບການຮັບຮອງຄຸນະພາບມາດຕະຖານຈາກໜ່ວຍງານUKASໃນ 3 ດ້ານຄື: ISO 9001:2008 Quality Management System, ISO 14001:2004Environmental Management System, OHSAS 18001:2007Occupational Health and Safety Management Systems. ➢ ໄດ້ມີການເປີດໃຊ້ສາງນ້ຳມັນທີ່ວຽງຈັນ ບໍລິມາດບັນຈຸ 1,120,000 ລິດ ແລະ ສາງນ້ຳມັນ ເມືອງເງິນ, ແຂວງ ໄຊຍະບູລີ ບໍລິມາດບັນຈຸ 700,000 ລິດ.
ປີ 2011	:	➢ ບໍລິສັດໄດ້ມີການເພີ່ມທຶນຈົດທະບຽນເປັນ 75.60 ຕື້ກີບ ເພື່ອຮອງຮັບການເຕີບໂຕ ແລະ ການລົງທຶນໃນການຂະຫຍາຍສະຖານີບໍລິການນ້ຳມັນໃຫ້ຄອບຄຸມທຸກພື້ນທີ່ຂອງ ສປປ ລາວ. ➢ ມີການເປີດສະຖານີບໍລິການນ້ຳມັນໃນຮູບແບບ ພລັສ ໂກລ(GLD) ເປັນແຫ່ງທຳອິດຂຶ້ນທີ່ ນະຄອນຫຼວງວຽງຈັນ. ➢ ໄດ້ມີການເປີດໃຊ້ສາງນ້ຳມັນທີ່ເມືອງ ປາກຊັນ, ແຂວງ ບໍລິຄຳໄຊ ບໍລິມາດບັນຈຸ 350,000 ລິດ. ➢ ມີສ່ວນແບ່ງທາງການຕະຫຼາດເປັນອັນດັບ 2 ທາງດ້ານທຸລະກິດເຊື້ອໄຟໃນ ສປປ ລາວ.
ປີ 2012	:	➢ ບໍລິສັດມີການເປີດສະຖານີບໍລິການນ້ຳມັນໃນຮູບແບບ ພລັສ ແພັລຕິນຳ (PTN) ເປັນສະຖານນີບໍລິການນ້ຳມັນທຳອິດຂຶ້ນທີ່ນະຄອນຫຼວງວຽງຈັນ ແລະ ໃສ່ຊື່ວ່າ ພລັສ ສະຖານີບໍລິການນ້ຳມັນ ດອນກອຍທີ່ບ້ານ ດອນກອຍ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ. ➢ ສາມາດຮັກສາສ່ວນແບ່ງທາງການຕະຫຼາດອັນດັບ 2 ທາງດ້ານທຸລະກິດເຊື້ອໄຟໃນສປປ ລາວ. ➢ ນຳໃຊ້ເຕັກໂນໂລຊີ ແລະ ລະບົບໄອທີທີ່ທັນສະໄໝເຂົ້າໃນການພັດທະນາ, ຄຸ້ມຄອງບໍລິຫານວຽກງານຂາຍຜ່ານເຄື່ອງຮູດບັດ (Electronic Data Capture: EDC)ແລະ ການເກັບກຳຂໍ້ມູນຈາກສູນກາງໄປຫາບັນດາສາຂາໃນຂອບເຂດທົ່ວປະເທດດ້ວຍການສ້າງຊອບແວລະບົບບໍລິຫານຂໍ້ມູນແບບລວມສູນ ຫຼື ERP System. ➢ ມີການລົງທຶນສ້າງລະບົບການບໍລິຫານການຂາຍນ້ຳມັນຜ່ານບັດອີເລັກໂທຣນິກ ຫຼື ບັດເຕີມນ້ຳມັນແທນເງິນສົດ (Fleet Card) ເປັນຜູ້ທຳອິດໃນ ສປປ ລາວ ເຊິ່ງເປັນຜູ້ລິເລີ່ມນຳເອົາເຕັກໂນໂລຊີໃນການບໍລິຫານ ແລະ ຄອບຄຸມຕົ້ນທຶນຄ່າໃຊ້ຈ່າຍໃນການບໍລິຫານຂອງຫ້ວໜ່ວຍທຸລະກິດ ລວມເຖິງຍັງເປັນບັດທີ່ສາມາດໃຊ້ແທນເງິນສົດໃນການຊຳລະຄ່ານ້ຳມັນໃຫ້ຜູ້ມາໃຊ້ບໍລິການໃນສະຖານີບໍລິການນ້ຳມັນຂອງບໍລິສັດ.
ປີ 2013	:	➢ ບໍລິສັດເພີ່ມທຶນຈົດທະບຽນເປັນ 350.00 ຕື້ກີບ ເພື່ອຮອງຮັບການເຕີບໂຕຂອງບໍລິສັດ ແລະ ການຂະຫຍາຍການລົງທຶນເພື່ອເປັນຜູ້ໃຫ້ບໍລິການໃນອັນດັບຕົ້ນຂອງ ສປປ ລາວ ແລະ ເພື່ອຮອງຮັບການ

		ເຕີບໂຕຂອງຄວາມຕ້ອງການນ້ຳມັນໃນ ສປປ ລາວ ແລະ ການເປີດປະຊາຄົມເສດຖະກິດອາຊຽນ (ASEAN Economic Community: AEC). ➢ ໄດ້ຮັບການສືບຕໍ່ຮັບຮອງຄຸນະພາບມາດຕະຖານຈາກໜ່ວຍງານUKASໃນທັງ 3 ດ້ານຄື: ISO 9001:2008, ISO 14001:2004, OHSAS 18001:2007. ➢ ໄດ້ມີການປັບປຸງໂຄງສ້າງບໍລິສັດ ແລະ ບໍລິສັດທີ່ກ່ຽວພັນໃຫ້ຊັດເຈນ ເພື່ອຮອງຮັບການເຕີບໂຕໃນໄລຍະຍາວ. ➢ ຍັງຄົງຮັກສາສ່ວນແບ່ງການຕະຫຼາດເປັນອັນດັບ 2 ຂອງຜູ້ຈຳໜ່າຍນ້ຳມັນເຊື້ອໄຟໃນ ສປປ ລາວ.
ປີ 2014	:	➢ ບໍລິສັດໄດ້ເຂົ້າເປັນສະມາຊິກ ສະມາຄົມ ນ້ຳມັນເຊື້ອໄຟ ແລະ ອາຍແກັດລາວທີ່ຂຶ້ນກັບສະພາການຄ້າ ແລະ ອຸດສາຫະກຳລາວ. ➢ ອີງຕາມກອງປະຊຸມຜູ້ຖືຮຸ້ນສາມັນປະຈຳປີ 2014 ໃນວັນທີ 18 ມີຖຸນາ 2014 ມີມະຕິຕົກລົງທີ່ສຳຄັນ ດັ່ງນີ້: – ຫຼຸດມູນຄ່າທີ່ກຳນົດໄວ້ຕໍ່ຮຸ້ນຈາກເດີມ 350,000,000 ກີບ ເປັນ 2,000 ກີບຕໍ່ຮຸ້ນ ສົ່ງຜົນໃຫ້ຈຳນວນຮຸ້ນຂອງບໍລິສັດເພີ່ມຂຶ້ນຈາກ 1,000 ຮຸ້ນ ເປັນ 175,000,000 ຮຸ້ນ. – ໄດ້ມີການກະຈາຍຮຸ້ນຈາກຜູ້ຖືຮຸ້ນເດີມ 2 ຄົນ ມາເປັນ 9 ຄົນ ເພື່ອຮອງຮັບການສ້າງຕັ້ງ ແລະ ປ່ຽນສະຖານະພາບເປັນບໍລິສັດມະຫາຊົນ. ➢ ອີງຕາມກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2014 ໃນວັນທີ 9 ຕຸລາ 2014 ມີມະຕິຕົກລົງທີ່ສຳຄັນດັ່ງນີ້: – ອະນຸມັດການເພີ່ມທຶນຈົດທະບຽນເປັນ 470.00ຕື້ກີບ ໂດຍການອອກຮຸ້ນສາມັນເພີ່ມທຶນຈຳນວນ 60,000,000 ຮຸ້ນ ມູນຄ່າກຳນົດ 2,000 ກີບຕໍ່ຮຸ້ນ ເພື່ອຮອງຮັບການສະເໜີຂາຍຮຸ້ນແກ່ມວນຊົນເປັນຄັ້ງທຳອິດ (IPO). – ສ້າງຕັ້ງບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ ແລະ ເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວຢ່າງເປັນທາງການ ໃນວັນທີ 9 ທັນວາ 2014.



ໂຄງຮ່າງການຈັດຕັ້ງຂອງ ປທລ





ສະພາຜູ້ອຳນວຍການຂອງ ປທລ



ທ່ານ ຫວ່າງ ລັດຕະນະວົງ
ປະທານສະພາບໍລິຫານ



ທ່ານ ຈັນທອນ ສິດທິໄຊ
ຮອງປະທານສະພາບໍລິຫານ/ຜູ້ອຳນວຍການໃຫຍ່



ທ່ານ ນາງ ສະຫວັນທອງ ພົງສະຫວັນ
ຮອງປະທານສະພາບໍລິຫານ



ທ່ານ ນາງ ດາລີ ພົນເສນາ
ຜູ້ອຳນວຍການ



ທ່ານ ໝຸພັນ ມະຫາພົນ
ຜູ້ອຳນວຍການ



ທ່ານ ໂພໄຊ ຈັນທະວົງ
ຜູ້ອຳນວຍການ



ທ່ານ ບຸນຖັນ ຈິດຕະວົງ
ຜູ້ອຳນວຍການ



ທ່ານ ນາງ ຈັນທະດອມ ເມກສະຫວັນ
ຜູ້ອຳນວຍການ



ທ່ານ ອຽງຄອນ ສິດທິໄຊ
ຜູ້ອຳນວຍການ

ການຂາຍ

ຕາຕະລາງສະຫຼຸບຍອດຂາຍໃນ 6 ເດືອນຕົ້ນປີ 2017

ລຳດັບ	ປະເພດລູກຄ້າ	ຍອດຂາຍ (ລິດ)	ໝາຍເຫດ
1	ປ້ຳນ້ຳມັນ Gas Stations	40,117,607	
2	ໂຄງການ ແລະ ກໍ່ສ້າງ Project + Construction	8,025,000	
3	ອຸດສາຫະກຳ ແລະ ຂົນສົ່ງ Ind + Tra	16,063,570	
4	ອື່ນໆ Other	4,783,000	
5	ນ້ຳມັນເຄື່ອງ Lubricants	40,522	
6	Re-Export	11,565,121	
	ລວມ Total	**80,594,820**	

ຕາຕະລາງປຽບທຽບແຜນ ແລະ ຍອດຂາຍເຄິ່ງປີ 2016- 2017

ແຜນຂາຍ 6 ເດືອນ ຕົ້ນປີ 2017	ຍອດຂາຍຕົວຈິງ 6 ເດືອນຕົ້ນປີ 2017	ສ່ວນຕ່າງ (+, -, %)	ຍອດຂາຍ 6 ເດືອນ ຕົ້ນປີ 2016	ສ່ວນຕ່າງສົມທຽບ 6 ເດືອນຕົ້ນປີ 2016-2017 (+, -, %)
148,940,000	80,594,820	-54.11%	85,578,728	-4.87%

- ໃນ 6 ເດືອນຕົ້ນປີນີ້ ພວກເຮົາໄດ້ເປີດບໍລິການປ້ຳນ້ຳມັນໃໝ່ 8 ປ້ຳ ຄື: ປ້ຳຂະໜາດໂກນລ໌ (Gold Type) 1 ສະຖານີບໍລິການ, ປ້ຳຂະໜາດມາດຕະຖານ 4 ສະຖານີບໍລິການ ແລະ ປ້ຳທ້ອງຖິ່ນພັດທະນາ 3 ສະຖານີບໍລິການ. ເຊິ່ງເປັນໄປຕາມກຳນົດເວລາຂອງແຜນການ ພ້ອມກັບຍອດຂາຍຂອງປ້ຳໃໝ່ແມ່ນຢູ່ໃນເກນທີ່ຄາດຄະເນໃນເບື້ອງຕົ້ນ.
- ການຂາຍດ້ານລູກຄ້າໂຄງການແມ່ນບໍ່ໄດ້ຕາມແຜນການຂາຍອັນເນື່ອງມາຈາກໂຄງການທີ່ໄດ້ເຊັນສັນຍາໄປແລ້ວນັ້ນໄດ້ມີການຊະລໍໂຄງການກໍ່ສ້າງຈາກນັກລົງທຶນ. ແຕ່ເຖິງຢ່າງໃດກໍ່ຕາມພວກເຮົາກໍ່ພະຍາຍາມຂະຫຍາຍຖານລູກຄ້າໂຄງການໃນຂອບເຂດທົ່ວປະເທດ ໃນນີ້ສາມາດປະຕິບັດໄດ້ທັງໝົດ 15 ໂຄງການ ໃນນັ້ນມີລູກຄ້າໃໝ່ໃນສ່ວນໂຄງການກໍ່ສ້າງ 2 ໂຄງການ ແລະ ອຸດສາຫະກຳ-ຂົນສົ່ງ 12 ບໍລິສັດ / ໂຮງງານ ໃນນັ້ນມີລູກຄ້າໃໝ່ 3 ລາຍ.
- ການຂາຍໃນຮູບແບບ Re-Export ໄດ້ມີການຊະລໍ ແລະ ທົບທວນຄືນເນື່ອງຈາກໄດ້ຮັບຜົນກະທົບດ້ານລົບໃນສະພາບການຄ້ານ້ຳມັນເຊື້ອໄຟໃນຂົງເຂດພູມມິພາກ.

ການຕະຫຼາດ

ໃນ 6 ເດືອນຕົ້ນປີ 2017 ຝ່າຍການຕະຫຼາດໄດ້ເລັ່ງໃສ່ການປັບປຸງພາບລັກໃຫ້ແກ່ປ້ຳ ພລັສ ທົ່ວປະເທດ ໃນການປັບປ່ຽນປ້າຍຕ່າງໆ ໃນສະຖານີບໍລິການໃຫ້ທັນສະໄໝຕາມຕົ້ນແບບຫຼັງຈາກທີ່ປ້ຳເຫຼົ່ານັ້ນເກົ່າແກ່ຊຸດໂຊມ ເຊິ່ງໃນ 6 ເດືອນຜ່ານມາສາມາດເຮັດການປັບປຸງພາບລັກ ແລະ ການບໍລິການພາຍໃນປ້ຳໄດ້ຢ່າງນ່າພໍໃຈ. ນອກນີ້ກໍ່ຍັງໄດ້ນຳສະເໜີຜະລິດຕະພັນ, ການສົ່ງເສີມການຂາຍ ແລະ ການບໍລິການຕ່າງໆ ຂອງບໍລິສັດແກ່ຜູ້ໃຊ້ບໍລິການທີ່ປ້ຳພລັສ ເຊັ່ນ: ການສະສົມຄະແນນແລກຂອງລາງວັນຈາກບັດສະມາສະມາຊິກສະມາຍກາດ, ໂປຣໂມຊັ່ນຕື່ມນ້ຳມັນແຖມນ້ຳດື່ມ, ການລ້າງແວ່ນລົດລູກຄ້າ ແລະ ອື່ນໆ ເຊິ່ງໄດ້ຮັບການຕອບຮັບທີ່ດີຈາກລູກຄ້າຜູ້ມາໃຊ້ການບໍລິການໄດ້ເພີ່ມຂຶ້ນຢ່າງເດັ່ນຊັດ.













ພວກເຮົາໄດ້ເລີ່ມໂຄງການຄືນກຳໄລໃຫ້ລູກຄ້າທີ່ນຳໃຊ້ບັດສະມາຊິກຂອງປ໊ຳ ພລັສ ໂດຍອອກແຄມເປນ ບັດ ສະມາຍ ທີ່ສາມາດນຳໄປເປັນສ່ວນຫຼຸດຈາກບັນດາຮ້ານຄ້າ, ຮ້ານກາເຟ ແລະ ຮ້ານອາຫານຕ່າງໆ ຫຼາຍກວ່າ 50 ຮ້ານ ໃນ ຂອບເຂດນະຄອນ ຫຼວງເຊິ່ງໄດ້ຮັບການຕອບຮັບທີ່ດີຈາກຜູ້ນຳໃຊ້ບັດ ແລະ ໄດ້ຮັບຄວາມຮ່ວມມືຈາກບັນດາຄູ່ຄ້າກໍ່ຄື ຮ້ານເຫຼົ່ານັ້ນເປັນຢ່າງດີ.



ໂຄງການປັນນ້ຳໃຈຊ່ວຍເຫຼືອຜູ້ປະສົບໄພໜາວ ປີທີ 6 ໃນເດືອນມັງກອນ ຕົ້ນປີ 2017 ກໍ່ໄດ້ດຳເນີນການຕໍ່ມາ ຈາກຊ່ວງທ້າຍປີທີ່ຜ່ານມາ ໂດຍຄະນະຄາລາວານການກຸສົນ ໄດ້ລົງໄປບໍລິຈາກຜ້າຫົ່ມໃຫ້ແກ່ພີ່ນ້ອງປະຊາຊົນທີ່ທຸກຍາກ ໃນເດືອນມັງກອນ 2015 ເຂດກຸ່ມບ້ານໃນເມືອງ ວຽງທອງ,ເມືອງ ໄຊຈຳພອນ ແຂວງບໍລິຄຳໄຊ ແລະ ເຂດກຸ່ມບ້ານໃນ ເມືອງຍົມມະລາດ ແລະ ເມືອງບໍລະພາ ແຂວງຄຳມ່ວນ ໄດ້ບໍລິຈາກຜ້າຫົ່ມ ຈຳນວນ 2,000ກວ່າຜືນ ແລະ ເຄື່ອງອັດຖ ປັດໃຈຂອງໃຊ້ຕ່າງໆ ທີ່ນຳໄປມອບໃຫ້ປະຊາຊົນໄດ້ຫຼາຍກວ່າ 600 ຄອບຄົວ.



ໂຄງການປູກປ່າຂອງ ປທລ ໃນປີ 2017 ໄດ້ປູກເບ້ຍໄມ້ມີຄ່າເຊັ່ນ: ໄມ້ດູ່, ໄມ້ແຕ້ຄ່າ ແລະ ໄມ້ສັກ ຈຳນວນ 5,000 ກວ່າເບ້ຍ ປູກໃນພື້ນທີ່ປ່າຟື້ນຟູສະຫງວນໃນເນື້ອທີ 5 ເຮັກຕາ ເຂດຂອງ ບ້ານ ສີສະຫວາດ ເມືອງ ນາຊາຍທອງ ນະຄອນຫຼວງວຽງຈັນ ໂດຍການປະສານສົມທົບຈາກຫ້ອງການກະສິກຳ ແລະ ປ່າໄມ້ຂອງເມືອງເປັນຢ່າງດີ.



ໃນຕົ້ນເດືອນ ມີຖຸນາ 2017 ທີ່ປ້ຳ ພລັສ ຫຼັກ 7 ຕັ້ງຢູ່ຖະໜົນ 13ໃຕ້ ເຂດບ້ານພະຂາວ ເມືອງນາຊາຍທອງ ນະຄອນຫຼວງວຽງຈັນ ໄດ້ເປີດບໍລິການຮ້ານອາຫານ ແລະ ກາເຟ ພາຍໃຕ້ຊື່ ຈັງເກິ້ນຄາເຟ່ ເພື່ອຕອບສະໜອງຄວາມຕ້ອງການຂອງລູກຄ້າທີ່ເຂົ້າມາໃຊ້ບໍລິການພາຍໃນປ້ຳ ພລັສ ໃຫ້ເປັນທາງເລືອກແກ່ນັກເດີນທາງ ແລະ ຜູ້ທີ່ຮັກໃນການດື່ມກາເຟ ພ້ອມທັງອາຫານ, ເຄັກ ເຂົ້າໜົມປັງອື່ນໆ ໄວ້ບໍລິການ ເຊິ່ງໄດ້ຮັບການຕອບຮັບຢ່າງດີຈາກຜູ້ມາໃຊ້ບໍລິການທີ່ນັບມື້ນັບຫຼາຍຂຶ້ນ.

ສາງນ້ຳມັນ, ອຸປະກອນກໍ່ສ້າງ ແລະ ສ້ອມແປງ

ການບໍລິຫານສາງນ້ຳມັນ

- ຮັບເຂົ້າສາງທັງໝົດ **73,332,800** ລິດ;
- ຈ່າຍອອກສາງທັງໝົດ **72,767,990** ລິດ;

- ຄ່າສະເລ່ຍການລະເຫີຍຂອງນ້ຳມັນແອັດຊັງ 95 ໃນລະຫວ່າງການເກັບຮັກສາເທົ່າກັບ -1,429 ລິດ, ຂອງ ຍອດຮັບທັງໝົດ 716,120 ລິດ ຢູ່ໃນເກນຄວບຄຸມມາດຕະຖານໃນອັດຕາສະເລ່ຍ 0.25 ສ່ວນຮ້ອຍ;
- ຄ່າສະເລ່ຍການລະເຫີຍຂອງ ນ້ຳມັນແອັດຊັງ 91 ໃນລະຫວ່າງການເກັບຮັກສາເທົ່າກັບ -25,610 ລິດ, ຂອງຍອດຮັບທັງໝົດ 17,363,661 ລິດ ຢູ່ໃນເກນຄວບຄຸມມາດຕະຖານ ໃນອັດຕາສະເລ່ຍ 0.25 ສ່ວນຮ້ອຍ;
- ຄ່າສະເລ່ຍການລະເຫີຍຂອງນ້ຳມັນກາຊວນໃນລະຫວ່າງການເກັບຮັກສາເທົ່າກັບ -33,521 ລິດຂອງຍອດ ຮັບທັງໝົດ 55,253,019 ລິດ ຢູ່ໃນເກນຄວບຄຸມມາດຕະຖານ ໃນອັດຕາສະເລ່ຍ 0.15 ສ່ວນຮ້ອຍ.
- ຮັບ-ຈ່າຍນ້ຳມັນເຄື່ອງທັງໝົດ 40,552 ລິດ;

ການຕິດຕັ້ງ ແລະ ສ້ອມແປງ

- ຕິດຕັ້ງເດີນທໍ່ນ້ຳມັນ ແລະ ຕູ້ຈ່າຍ 23 ໂຄງການ;
- ຕິດຕັ້ງແທ່ງນ້ຳມັນ ແລະ ຕູ້ຈ່າຍໃຫ້ແກ່ລູກຄ້າໂຄງການ 3 ໂຄງການ;
- ຄາລິເບດແທ່ງນ້ຳມັນໃຫ້ປ້ຳໃໝ່ 8 ປ້ຳ;
- ອອກສ້ອມແປງ ແລະ ວຽກບຳລຸງຮັກສາທົ່ວປະເທດ 92 ຄັ້ງ.

ວຽກງານດ້ານບຸກຄະລາກອນ

ການດຳເນີນງານດ້ານບຸກຄະລາກອນໃນຊ່ວງ 6 ເດືອນຕົ້ນປີ 2017 ຜ່ານມາແມ່ນເນັ້ນໃນການເປັນຄູ່ຮ່ວມ ທາງຍຸດທະສາດຂອງອົງກອນ ໃນການສັນຫາບຸກຄະລາກອນທີ່ເໝາະສົມເຂົ້າຕຳແໜ່ງທີ່ຫວ່າງຢ່າງມີປະສິດທິພາບ, ເປັ່ງແຍງສະຫວັດດີການຂອງພະນັກງານຕາມກົດລະບຽບພາຍໃນບໍລິສັດ ແລະ ຕາມກົດໝາຍແຮງງານວ່າງອອກ.

ນອກນີ້ກໍ່ຍັງໄດ້ຈັດໃຫ້ມີການຝຶກອົບຮົມໃນຫົວຂໍ້ຕ່າງໆ ເພື່ອເພີ່ມທັກສະ ແລະ ຄວາມຮັບຮູ້ຂອງພະນັກງານ ພາຍໃນອົງກອນດັ່ງນີ້:

- ໂຄງການອົບຮົມລະບຽບສະບັບປັບປຸງພາຍໃນບໍລິສັດ;
- ໂຄງການຝຶກອົບຮົມເລື່ອງຄວາມປອດໄພໃນການຂັບຂີ່ພາຫະນະ;
- ຮັບຟັງປາຖະກະຖາເນື່ອງໃນວັນທີ່ລະນຶກວັນຜ່າວ່ຳລ້ອມຂອງກອງພັນທີ 2 ແລະ ວັນວິລະກຳແຫ່ງ ຄຸກໂພນເຄັ່ງຂອງຜູ້ນຳພັກ ແລະ ແນວລາວຮັກຊາດ;
- ໂຄງການຝຶກອົບຮົມເລື່ອງການປະຫຍັດພະລັງງານໄຟຟ້າ.

ຈຳນວນພະນັກງານປທລ ໃນ 6 ເດືອນຕົ້ນປີ 2017

ລາຍລະອຽດ	ພະນັກງານຖາວອນ			ພະນັກງານສັນຍາຈ້າງ		
	ຍິງ	ຊາຍ	ລວມ	ຍິງ	ຊາຍ	ລວມ
ຫ້ອງການໃຫ່ຍ	65	80	145	8	6	14
ສະຫວັນນະເຂດ	6	12	18	1	-	1
ເມືອງເງິນ	2	8	10	2	-	2
ປາກຊັນ	-	6	6	-	-	-
ປາກເຊ	-	4	4	-	-	-
ລວມ	**73**	**110**	**183**	**10**	**6**	**17**

ວຽກງານດ້ານການຊ່ວຍເຫຼືອສັງຄົມ

ລດ	ເນື້ອໃນ	ມູນຄ່າ (ກີບ)
1	ສະໜັບສະໜູນງານກິລາຂອງດ່ານພາສີສາກົນແຂວງໄຊຍະບູລີ	1,000,000
2	ໂຄງການ ປັນນ້ຳໃຈຊ່ວຍເຫຼືອຜູ້ປະສົບໄພໜາວ ແຂວງບໍລິຄຳໄຊ	206,520,000
3	ປະກອບສ່ວນຊ່ວຍກໍ່ສ້າງປ້າຍເຄື່ອງໝາຍຊາດຢູ່ໜ້າດ່ານຂົວມິຕະພາບ	1,000,000
4	ອຸປະຖຳເຄື່ອງກິລາໃຫ້ຫ້ອງການກອງບັນຊາການ ປກສ ນະຄອນຫລວງ	3,000,000
5	ສະໜັບສະໜູນງານກິລາໃຫ້ກັບກະຊວງອຸດສາຫະກຳການຄ້າ (ກົມການຄ້າພາຍໃນ)	2,000,000
6	ອຸປະຖຳເຄື່ອງກິລາໃຫ້ຫ້ອງການບ້ານໂພນທັນ	1,000,000
7	ຊ່ວຍຍູ້ນ້ຳມັນໃຫ້ບ້ານໜອງແຫ້ວໃນການກໍ່ສ້າງທໍ່ລະບາຍນ້ຳ	1,000,000
8	ສະໜັບສະໜູນງານກິລາ ພະແນກອາກອນ ແຂວງສະຫວັນນະເຂດ	1,000,000
9	ຊື້ຄອມພິວເຕີຕັ້ງໂຕະ ແລະ ປິ້ນເຕີໃຫ້ກອງບັນຊາການ ປກສ ເມືອງໄຊເສດຖາ	6,000,000
10	ສະໜັບສະໜູນງານກິລາດ່ານພາສີ ທົ່ວປະເທດ	9,000,000
11	ອຸປະຖຳນ້ຳມັນລົດໃຫ້ໜ່ວຍກູ້ໄພຄົນທຸກຍາກ 1623 ເດືອນລະ 200 ລິດ	18,648,000
12	ອຸປະຖຳນ້ຳມັນລົດໃຫ້ໜ່ວຍກູ້ໄພ 1624 ເດືອນລະ 100 ລິດ	9,324,000
13	ອຸປະຖຳນ້ຳມັນລົດໃຫ້ໜ່ວຍກູ້ໄພກາແດງ ເດືອນລະ 200 ລິດ	18,648,000
	ລວມ	**278,140,000**

ສະຫຼຸບການມອບພັນທະອາກອນ ແລະ ອື່ນໆ ເຂົ້າລັດ 6 ເດືອນຕົ້ນປີ 2017

• ພາສີນຳເຂົ້າ	18,184,101,231 ກີບ
• ອາກອນຊົມໃຊ້	58,900,855,500 ກີບ
• ອາກອນມູນຄ່າເພີ່ມ	31,802,020,100 ກີບ
• ຄ່າບູລະນະທາງ	34,506,680,000 ກີບ
• ຄັງແຮ	33,009,100,000 ກີບ
• E-Meter	1,459,898,000 ກີບ
• ກວດກາຄຸນນະພາບ	2,123,488,000 ກີບ
• ອມພ ເພີ່ມພາຍໃນປີ	6,579,394,668 ກີບ
• ອາກອນເງິນເດືອນ	640,656,718 ກີບ

ລວມ: 187,206,194,217 ກີບ

**** ບົດລາຍງານທາງດ້ານບັນຊີ ແລະ ການເງິນ (ແຍກຕ່າງຫາກ)***

ຮອງປະທານສະພາບໍລິຫານ

ບໍລິສັດ ປິໂຕຣລ່ຳມເທຣດດິ້ງລາວ ມະຫາຊົນ Petroleum Trading Lao Public Company

ຈັນທອນ ສິດທິໄຊ